| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| **ຊື່ໃບອະນຸຍາດ** | ທະບຽນເຮືອ | |
| **ປະເພດຂອງໃບອະນຸຍາດ** | ການຂຶ້ນທະບຽນ | |
| **ເລກລະຫັດໃບອະນຸຍາດ** | **ວັນທີ** | **ໜ່ວຍງານຮັບຜິດຊອບ** |
| MoPWT-IWTD-13 | 17.11.2017 | ກົມໂຍທາທິການແລະຂົນສົ່ງທາງນໍ້າ |

| ຂໍ້ມູນພື້ນຖານ | |
|---|---|
| **ຮູບແບບການສົ່ງຄໍາຮ້ອງ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| **ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ** | H - ການຂົນສົ່ງ ແລະ ສາງສິນຄ້າ, ທຸກພາກສ່ວນ |
| **ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ** | ເພື່ອໃຊ້ເປັນຫລັກຖານ ກ່ຽວກັບ ສິດຄອບຄອງ ແລະ ການນໍາໃຊ້ເຮືອຢ່າງຖືກຕ້ອງຕາມລະບຽບກົດໝາຍ ແລະ ເມື່ອເຮືອໄດ້ຮັບການຂຶ້ນທະບຽນແລ້ວ, ເຮືອດັ່ງກ່າວ ຈະໄດ້ຮັບສະຖານະເປັນເຮືອສັນຊາດລາວ |
| **ຜູ້ທີ່ຕ້ອງຂໍໃບອະນຸຍາດ** | ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງໃດໜຶ່ງທີ່ມີຈຸດປະສົງຈົດທະບຽນສິດຄອບຄອງເໜືອເຮືອຂອງຕົນ ຊຶ່ງແມ່ນ ຍານພາຫະນະທາງນໍ້າທຸກຊະນິດ ທີ່ຂັບເຄື່ອນດ້ວຍເຄື່ອງຈັກ, ດ້ວຍການພາຍ, ຄົນທໍ່ ຫລື ວິທີການອື່ນ ສໍາລັບໃຊ້ໃນຈຸດປະສົງຕ່າງໆ |
| **ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່?** | ບໍ່ມີ |
| **ທີ່ຢູ່ຂອງຂໍ້ມູນອອນລາຍ** | |
| **ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່?** | ແມ່ນແລ້ວ |
| **ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ** | 1. ກົມໂຍທາທິການທາງນໍ້າ ຂຶ້ນທະບຽນເຮືອ ປະເພດຕ່າງໆ ຄື: (i) ເຮືອຂົນສົ່ງຜູ້ໂດຍສານ ແລະ ເຮືອຂົນສົ່ງສິນຄ້າ ລະຫວ່າງປະເທດ ທຸກຂະໜາດ; (ii) ເຮືອຂົນສົ່ງໂດຍສານ ແລະ ທ່ອງທ່ຽວ ຂະໜາດບັນຈຸເກີນ 100 ບ່ອນນັ່ງ, ເຮືອຂົນສົ່ງສິນຄ້າ ຂະໜາດບັນທຸກເກີນ 300 ໂຕນ, ເຮືອແພຮ້ານອາຫານຂະໜາດບັນຈຸເກີນ 100 ຄົນ, ແລະ ເຮືອຂຸດຄົ້ນຫີນແຮ່ຊາຍ ແລະ ເຮືອກໍ່ສ້າງວິສະວະກໍາຂະໜາດໃຫຍ່ 2. ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫລວງ ຂຶ້ນທະບຽນເຮືອປະເພດຕ່າງໆ ຄື: ເຮືອຂົນສົ່ງໂດຍສານລວມທັງເຮືອທ່ອງທ່ຽວ ຂະໜາດບັນຈຸເກີນ |

| ຂໍ້ມູນພື້ນຖານ | |
|---|---|
| | 15-100 ບ່ອນນັ່ງ, ເຮືອຂົນສົ່ງສິນຄ້າຂະໜາດບັນຈຸເກີນ 15-300 ໂຕນ, ເຮືອບັກລະຫວ່າງປະເທດ, ເຮືອບັກບັນທຸດລົດໃຫຍ່, ເຮືອແພຮ້ານອາຫານຂະໜາດບັນຈຸເກີນ 50-100 ຄົນ, ເຮືອຂຸດຄົ້ນຊັບພະຍາກອນ ແລະ ເຮືອກໍ່ສ້າງຂະໜາດອື່ນ ທີ່ບໍ່ແມ່ນຂະໜາດໃຫຍ່, ເຮືອກາບ ແລະ ເຮືອກິລາທີ່ແລ່ນດ້ວຍເຄື່ອງຈັກ ເກີນ 5 ແຮງມ້າ 3. ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ຂຶ້ນທະບຽນ ເຮືອຂົນສົ່ງໂດຍສານ ລວມທັງ ເຮືອທ່ອງທ່ຽວ ຂະໜາດບັນຈຸ 5 ບ່ອນນັ່ງຂຶ້ນໄປ ແຕ່ບໍ່ໃຫ້ເກີນ 15 ບ່ອນນັ່ງ, ເຮືອຂົນສົ່ງສິນຄ້າຂະໜາດບັນທຸກ 500 ກິໂລກຣາມ ຫລື 0.5 ໂຕນຂຶ້ນໄປ ແຕ່ບໍ່ເກີນ 15 ໂຕນ, ເຮືອບັກບັນທຸກລົດຈັກ, ເຮືອແພຮ້ານອາຫານ ຂະໜາດບັນຈຸ ບໍ່ເກີນ 50 ຄົນ, ແລະ ເຮືອປະມົງ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄຳຮ້ອງ ໃນການອອກໃບອະນຸຍາດ | 17 | 1. ອົງການຄຸ້ມຄອງທະບຽນເຮືອຈະກວດກາເອກະສານປະກອບຄຳຮ້ອງ ແລະ ແຈ້ງຕອບ ຢ່າງຊ້າບໍ່ເກີນ 7 ວັນລັດຖະການ 2. ເມື່ອເຫັນວ່າ ເອກະສານຄົບຖ້ວນແລ້ວ, ກໍ່ລົງກວດກາສະພາບຕົວຈິງຂອງເຮືອ ແລະ ຫາກຖືກຕ້ອງແລ້ວ ກໍ່ຈະຈົດເຂົ້າໃນປື້ມບັນທຶກການຂຶ້ນທະບຽນເຮືອ ແລະ ອອກໃບທະບຽນເຮືອ ຢ່າງຊ້າບໍ່ເກີນ 10 ວັນລັດຖະການ ນັບແຕ່ວັນທີ່ໄດ້ຜ່ານການກວດກາສະພາບຕົວຈິງຂອງເຮືອ |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | ຕ້ອງເປັນເຈົ້າຂອງເຮືອ ໂດຍຕ້ອງມີໜັງສືຢັ້ງຢືນຄວາມເປັນກຳມະສິດຂອງເຮືອ ຢ່າງຖືກຕ້ອງຕາມກົດໝາຍ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ປະຕິເສດໃນກໍລະນີ ຜູ້ຮ້ອງຂໍບໍ່ແມ່ນເຈົ້າຂອງເຮືອ ຫລື ກໍລະນີໄປກວດກາສະພາບຕົວຈິງຂອງເຮືອ ແລະ ພົບວ່າ ສະພາບຕົວຈິງຂອງເຮືອ ບໍ່ກົງກັບຂໍ້ມູນທີ່ໄດ້ແຈ້ງຢູ່ໃນເອກະສານ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກຳນົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນຳໃຊ້ ຈັກເດືອນ? |
| ບໍ່ມີ | 0 |
| ຂັ້ນຕອນ ແລະ ເງື່ອນໄຂ ສຳລັບການຕໍ່ອາຍຸໃບອະນຸຍາດ | |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມຄໍາ ຮ້ອງ ຫລື ບໍ່? | ຄ່າບໍລິການວິຊາ ການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 50000.00 | 250000.00 | 0.00 | 300000.00 |
| ຄໍາເຫັນ | ອີງຕາມ ລັດຖະບັນຍັດປະທານປະເທດ 03/ປທ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| ຄໍາເຫັນ | | | | |

| ນິຕິກໍາທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ນິຕິກໍາ | ເລກທີ | ວັນທີ | ຄໍາເຫັນ |
| ຂໍ້ຕົກລົງວ່າດ້ວຍ ລະບຽບການກ່ຽວກັບການຂຶ້ນທະບຽນເຮືອ | 00177/ຍທຂ | 04.01.2013 | ໝວດທີ 2 ການຂຶ້ນທະບຽນເຮືອ, (ມາດຕາ 6 ຫາ ມາດຕາ 11) ໝວດທີ 4 ການຄຸ້ມຄອງ ແລະ ການກວດກາ (ມາດຕາ 21 ຫາມາດຕາ 24) |

| ເອກະສານປະກອບ |
|---|
| ຊື່ເອກະສານ |
| ໃບຢັ້ງຢືນທີ່ກ່ຽວຂ້ອງເຖິງ ກໍາມະສິດຂອງເຮືອໃນປະຈຸບັນ |
| ໃບຢັ້ງຢືນຍົກເລີກທະບຽນເຮືອ ກໍລະນີເຮືອເຄີຍໄດ້ຂຶ້ນທະບຽນຢູ່ຕ່າງປະເທດ |
| ໃບຢັ້ງຢືນການເສຍພາສີ ຫລື ຍົກເວັ້ນພາສີ ກໍລະນີການນໍາເອົາເຮືອເຂົ້າມາຈາກຕ່າງປະເທດ |
| ໃບອະນຸຍາດນໍາເຂົ້າ, ໃບນໍາສົ່ງສິນຄ້າ ແລະ ໃບຮັບເງິນຄ່າເຮືອ |

| ເອກະສານປະກອບ |
|---|
| ໃບຢັ້ງຢືນຄວາມປອດໄພທາງດ້ານເຕັກນິກ ແລະ ສິ່ງແວດລ້ອມຂອງເຮືອ |
| ຮູບຖ່າຍດ້ານຂ້າງຂວາ ເຕັມລໍາ ຕາມລວງຍາວຂອງເຮືອ ໃນສະພາບລອຍຕົວ ຂະໜາດ 10x15 ຊັງຕີແມັດ |
| ສໍາເນົາບັດປະຈໍາຕົວ/ສໍາມະໂນຄົວຂອງອໍານວຍການ |
| ໃບຢັ້ງຢືນທີ່ຢູ່ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 4 | 0 |